

# ເງິນອເລັກໂທນິກຊ່ວຍໂລກລະບາດ (Pandemic EBT (P-EBT)): ໂຄງການອາຫານໃນໂຮງຮຽນແບບສຸກເສີນ ໄດ້ຮັບການຊ່ວຍເຫຼືອຊື້ເຄື່ອງຍ່ອຍໃນເມື່ອປິດໂຮງຮຽນແລ້ວ

ລູກຂອງທ່ານໄດ້ຮັບອາຫານຢູ່ໂຮງຮຽນໂດຍບໍ່ເສຍຄ່າ ຫຼື ຫຼຸດລາຄາ ຫຼື ໂຮງຮຽນຂອງລູກຂອງທ່ານໄດ້ໃຫ້ອາຫານທຸກຢ່າງແບບບໍ່ເສຍຄ່າແມ່ນບໍ?

**ແມ່ນ** → ທ່ານໄດ້ຮັບເງິນຊ່ວຍເຫຼືອອາຫານພື້ນຖານບໍ?

- **ແມ່ນ** → **ທ່ານຈະໄດ້ຮັບ P-EBT ແບບອັດຕະໂນມັດຢູ່ໃນບັດ EBT ຂອງທ່ານ.**

  **ເງິນຊ່ວຍເຫຼືອຈະຖືກເພີ່ມເຂົ້າໃນບັດ EBT ຂອງທ່ານພາຍໃນວັນທີ 7 ເດືອນກໍລະກົດ.**

- **ບໍ່** → **ທ່ານຈຳເປັນຕ້ອງສະໝັກເອົາ P-EBT ໂດຍເຂົ້າໄປທີ່ WashingtonConnection.org ຫຼື ໂດຍການໂທ 877-501-2233.**

  ບັດ EBT ຂອງທ່ານຈະມາທາງໄປສະນີພາຍໃນ 35 ວັນລັດຖະການຈາກວັນທີສະໝັກ (ການສະໝັກຈະເປີດພາຍໃນວັນທີ 30 ມິຖຸນາ).

**ບໍ່** → **ໂທຫາໂຮງຮຽນໃນເຂດທ້ອງຖິ່ນຂອງທ່ານເພື່ອຂໍສະໝັກເອົາອາຫານໃນໂຮງຮຽນໂດຍບໍ່ເສຍຄ່າ/ຫຼຸດລາຄາ ແລະ ຫຼັງຈາກນັ້ນສະໝັກເອົາ P-EBT**

## ໃຜມີສິດ?

ນັກຮຽນທີ່ໄປໂຮງຮຽນຊັ້ນ K-12 ທີ່ໃຫ້ໂຄງການອາຫານທ່ຽງຂອງໂຮງຮຽນໃນສົກປີຮຽນ ແລະ

- ມີສິດໄດ້ຮັບອາຫານໃນໂຮງຮຽນໂດຍບໍ່ເສຍຄ່າ ຫຼື ຫຼຸດລາຄາ; ຫຼື
- ກຳລັງເຂົ້າໂຮງຮຽນບ່ອນທີ່ອາຫານການກິນແມ່ນບໍ່ເສຍຄ່າ ສຳລັບນັກຮຽນທຸກຄົນ

## ຄອບຄົວຄົນເຂົ້າເມືອງສະໝັກໄດ້ບໍ?

ແມ່ນ. ການນຳໃຊ້ເງິນຊ່ວຍເຫຼືອ P-EBT ບໍ່ໄດ້ຄິດໄລ່ແບບຄ່າທຳນຽມສາທາລະນະ. P-EBT ບໍ່ປ່ຽນສະຖານະພາບການເຂົ້າເມືອງຂອງພໍ່ແມ່ ຫຼື ເດັກ. P-EBT ປ່ຽນແທນອາຫານໃນໂຮງຮຽນ ແລະ ສຳລັບທຸກໆຄອບຄົວທີ່ໄດ້ຮັບອາຫານໃນໂຮງຮຽນໂດຍບໍ່ເສຍຄ່າ ແລະ ຫຼຸດລາຄາ.

## ເງິນຊ່ວຍເຫຼືອແມ່ນຫຍັງ?

ສຳລັບເດັກນ້ອຍທີ່ໄດ້ຮັບອາຫານໂດຍບໍ່ເສຍຄ່າ ຫຼື ຫຼຸດລາຄາເມື່ອປິດໂຮງຮຽນໃນເດືອນມີນາ, ແຕ່ລະຄອບຄົວຈະໄດ້ຮັບ $ 399 ຕໍ່ເດັກໜຶ່ງຄົນ. ສຳລັບບັນດາຄອບຄົວທີ່ລົງທະບຽນເຂົ້າໃນອາຫານພື້ນຖານ ຫຼື ສະໝັກຂໍເອົາເງິນຊ່ວຍເຫຼືອດ້ານອາຫານຫຼັງຈາກໂຮງຮຽນປິດແລ້ວ, ເດັກແຕ່ລະຄົນຈະໄດ້ຮັບໜ້ອຍກວ່ານັ້ນ. ມູນຄ່າຂຶ້ນຢູ່ກັບເມື່ອໃດທ່ານສະໝັກຂໍເອົາການຊ່ວຍເຫຼືອດ້ານອາຫານ.

## ຂໍ້ມູນສຳຄັນ

- **ການສະໝັກເອົາ P-EBT ຕ້ອງເຮັດໃຫ້ສຳເລັດພາຍໃນວັນທີ 31 ເດືອນສິງຫາປີ 2020 ຫຼື ກ່ອນເລີ່ມຕົ້ນສົກຮຽນປີ 2020-2021 - ອັນໃດກໍ່ຕາມທີ່ຮອດພາຍຫລັງ.**
- **ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອເຂົ້າໃຈການມີສິດຂອງທ່ານ ຫຼື ວິທີການສະໝັກຂໍເອົາເງິນຊ່ວຍເຫຼືອ, ເບິ່ງຄຳຖາມທີ່ຖາມເປັນປະຈຳທີ່ k12.wa.us/PEBT ຫຼື ໂທຫາພະແນກບໍລິການສັງຄົມ ແລະ ສຸຂະພາບ (Department of Social and Health Services) ທີ່ 877-501-2233.**

ບັດເງິນຊ່ວຍເຫຼືອຂອງທ່ານຈະຄືແນວນີ້:




Washington State Department of Social & Health Services
*Transforming lives*

Washington Office of Superintendent of PUBLIC INSTRUCTION

*ສະຖາບັນນີ້ເປັນຜູ້ໃຫ້ໂອກາດເທົ່າທຽມກັນ.*